IT

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0530 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 26 ມິຖຸນາ 2019

## ປະກາດຮັບສະໝັກລັດຖະກອນໃໝ່

ກະຊວງການເງິນຂໍຖືເປັນກຽດແຈ້ງມາຍັງທ່ານທີ່ມີຄວາມສົນໃຈຢາກສະໝັກເຂົ້າເປັນລັດຖະກອນໃໝ່ຂອງກະຊວງການເງິນ ປີ 2019 ຊາບວ່າ: ປະຈຸບັນກະຊວງການເງິນຈະໄດ້ຈັດຕັ້ງການສອບເສັງຄັດເລືອກເອົາລັດຖະກອນໃໝ່ຜູ້ທີ່ມີຄວາມຮູ້, ຄວາມສາມາດເພື່ອປະກອບໃສ່ຕຳແໜ່ງງານທີ່ຍັງຫວ່າງ ລາຍລະອຽດມີດັ່ງນີ້:

I. **ວິຊາສະເພາະທີ່ຕ້ອງການ.**

1. ການເງິນ-ການບັນຊີ;
2. ວິຊາ IT.

II. **ການສັບຊ້ອນພາຍຫຼັງສອບເສັງໄດ້.**

ກະຊວງການເງິນຈະບໍ່ສັບຊ້ອນຜູ້ທີ່ສອບເສັງໄດ້ ໄປສັງກັດຢູ່ ຂະແໜງພາສີ ແລະ ສ່ວຍສາອາກອນ, ຈະໄດ້ສັບຊ້ອນ ໄປສັງກັດຢູ່ ກົມວິຊາສະເພາະອື່ນໆຂອງກະຊວງການເງິນ ແລະ ຈຳນວນໜຶ່ງຈະໄດ້ສັບຊ້ອນ ໄປສັງກັດຢູ່ ຂະແໜງການເງິນຂັ້ນທ້ອງຖິ່ນ ທີ່ຍັງຂາດພະນັກງານ, ຖ້າຜູ້ສອບເສັງໄດ້ບໍ່ໄປຕາມການສັບຊ້ອນຂອງກະຊວງການເງິນ ຖືວ່າສະຫຼະສິດ.

III. **ມາດຕະຖານ ແລະ ເງື່ອນໄຂຂອງຜູ້ທີ່ຈະເຂົ້າຮ່ວມການສອບເສັງ.**

1. ເປັນພົນລະເມືອງລາວຖືສັນຊາດລາວ, ເພດ: ຊາຍ ຫຼື ຍິງ, **ມີອາຍຸ 18 ຂຶ້ນໄປ ແຕ່ບໍ່ເກີນ 35 ປີ;**
2. ບໍ່ເຄີຍຖືກສານປະຊາຊົນຕັດສິນລົງໂທດ, ຕັດອິດສະຫຼະພາບ, ບໍ່ເຄີຍຖືກວິໄນໄລ່ອອກຈາກອົງການຈັດຕັ້ງພັກ-ລັດ, ເອກະຊົນ ແລະ ລັດວິສາຫະກິດ ຫຼື ອົງການຈັດຕັ້ງສາກົນ;
3. ມີສຸຂະພາບແຂງແຮງ, ມີມະນຸດສຳພັນດີ, ມີຄວາມອົດທົນ ແລະ ສັດຊື່ບໍລິສຸດ;
4. ສະຂາວິຊາການເງິນ-ການບັນຊີ: ຕ້ອງມີໃບປະກາສະນີຍະບັດຮຽນຈົບຊັ້ນສູງຂຶ້ນໄປ **ຈົບຢູ່ພາຍໃນ ຫຼື ຕ່າງປະເທດ, ສ່ວນຜູ້ທີ່ຮຽນຈົບສາຂາວິຊາອື່ນແມ່ນບໍ່ຮັບຄຳຮ້ອງສະໝັກສອບເສັງ.**
5. ສຳລັບວິຊາ IT: ຕ້ອງມີໃບປະກາສະນີຍະບັດຮຽນຈົບຊັ້ນສູງຂຶ້ນໄປ **ໃນສາຂາວິຊາ: ວິທະຍາສາດຄອມພິວເຕີ, ວິສະວະກຳຄອມພິວເຕີ, ເຕັກໂນໂລຊີຂໍ້ມູນຂ່າວສານ ຈົບຢູ່ພາຍໃນ ຫຼື ຕ່າງປະເທດ;**
6. ມີປະສົບການເຮັດວຽກກ່ຽວກັບຂະແໜງວິຊາທີ່ຕ້ອງການດັ່ງກ່າວມາຂ້າງເທິງຍິ່ງເປັນການດີ ;
7. ເວລາມາຍື່ນເອກະສານຕ້ອງຖືໃບປະກາສະນີຍະບັດ ແລະ ໃບຄະແນນ ສະບັບແທ້ມາຢັ້ງຢືນ.

IV. ວິທີສະໝັກ ມີ 02 ວິທີ.

1. ວິທີ 01: ຜູ້ທີ່ມີຄວາມສົນໃຈຢາກສອບເສັງ ສາມາດເຂົ້າໄປພົວພັນຮັບຄໍາຮ້ອງສະໝັກເຂົ້າສອບເສັງ ໄດ້ທີ່ ສະຖາບັນເສດຖະກິດ-ການເງິນ ( ດົງຄໍາຊ້າງ);
2. ວິທີ 02: ສາມາດດາວໂຫຼດຄໍາຮ້ອງສະໝັກເຂົ້າສອບເສັງ ໄດ້ທາງເວບໄຊ໌ ກະຊວງການເງິນ www.mof.gov.la

V. ເອກະສານປະກອບຂໍສະໝັກເຂົ້າສອບເສັງ.

| | | |
|---|---|---|
| 1. | ໜັງສືຄໍາຮ້ອງສະໝັກເຂົ້າສອບເສັງ ( ຂອງກະຊວງການເງິນ ) | 01 ຊຸດ; |
| 2. | ສໍາເນົາໃບປະກາສະນີຍະບັດ ແລະ ໃບຄະແນນ ຢ່າງລະ | 01 ຊຸດ; |
| 3. | ຊີວະປະຫວັດທົ່ວໄປ | 01 ຊຸດ; |
| 4. | ສໍາເນົາປຶ້ມສໍາມະໂນຄົວ ຫຼື ບັດປະຈໍາຕົວ | 01 ຊຸດ; |
| 5. | ຮູບຖ່າຍບໍ່ເກີນ 03 ເດືອນ ( ຂະໜາດ 3x4 ) | 03ໃບ; |
| 6. | ສໍາເນົາໃບຢັ້ງຢືນປະສົບການເຮັດວຽກ ການເງິນ-ການບັນຊີ ແລະ ໄອທີ | (ຖ້າມີ). |

VI. ການພົວພັນ, ຄ່າທໍານຽມ, ວັນ, ເວລາ ແລະ ສະຖານທີ່ສອບເສັງ.

1. ພາຍຫຼັງປະກອບເອກະສານແລ້ວໃຫ້ຍື່ນເອກະສານສະໝັກດ້ວຍຕົນເອງຢູ່ທີ່ ສະຖາບັນເສດຖະກິດ-ການເງິນ ( ດົງຄໍາຊ້າງ ) ແລະ ບໍ່ອະນຸຍາດໃຫ້ບຸກຄົນອື່ນມາພົວພັນຮັບ-ສົ່ງ ເອກະສານແທນ;
2. ຄ່າທໍານຽມລົງທະບຽນເຂົ້າຮ່ວມການສອບເສັງ ຄົນລະ 20.000 ກີບ ( ຊາວພັນກີບ );
3. ເລີ່ມພົວພັນ ແລະ ຮັບເອກະສານສະໝັກສອບເສັງ ນັບແຕ່ວັນທີ 01 ກໍລະກົດ 2019 ເປັນຕົ້ນໄປ ( ກໍານົດ 05 ວັນ ລັດຖະການ ) ແລະ ປິດຮັບຄໍາຮ້ອງ ວັນທີ 05 ກໍລະກົດ 2019 ( ເວລາ 16: 00 ໂມງ );
4. ໃຫ້ຜູ້ສະໝັກເຂົ້າສອບເສັງມາຕິດຕາມເບິ່ງລາຍຊື່ ແລະ ຫ້ອງສອບເສັງ ຢູ່ທີ່ສະຖາບັນເສດຖະກິດ-ການເງິນ ( ດົງຄໍາຊ້າງ ) ຢ່າງໜ້ອຍ 01 ວັນ ກ່ອນມື້ສອບເສັງ;
5. ມື້ສອບເສັງ: ວັນທີ 13 ກໍລະກົດ 2019 ຢູ່ທີ່ສະຖາບັນເສດຖະກິດ-ການເງິນ ( ດົງຄໍາຊ້າງ ) ເລີ່ມແຕ່ເວລາ 8:00 ໂມງ ເປັນຕົ້ນໄປ;
6. ຕິດຕໍ່ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່ ກົມຈັດຕັ້ງ ແລະ ພະນັກງານ ກະຊວງການເງິນ ຖະໜົນ 23 ສິງຫາ, ບ້ານໜອງບອນ, ເມືອງໄຊເສດຖາ,ນະຄອນຫຼວງວຽງຈັນ ໂທ/ແຟັກ: 021 451 836, 020 22222883.

ຫົວໜ້າກົມ

ສິດທິສອນ ເທບພາສີ